BANK OF THE LAO PDR
ທະນາຄານແຫ່ງ ສປປ ລາວ
ຂ່າວ NEWS
ພະແນກຂໍ້ມູນຂ່າວສານ ແລະ ປະຊາສຳພັນ ຫ້ອງການ ທຫລ
ໂທ/ແຟກ (856-21) 213109, 213110

# ທ່ານ ຜູ້ວ່າການທະນາຄານແຫ່ງ ສປປ ລາວ ພ້ອມດ້ວຍຄະນະ ເຄື່ອນໄຫວເຮັດວຽກຢູ່ແຂວງຫົວພັນ



ໃນລະຫວ່າງວັນທີ 01 - 02 ກຸມພາ 2024, ຄະນະນຳພັກ-ລັດ ຂອງກະຊວງການເງິນ, ກະຊວງປ້ອງກັນປະເທດ, ທະນາຄານແຫ່ງ ສປປ ລາວ (ທຫລ) ແລະ ກະຊວງແຜນການ ແລະ ການລົງທຶນ ໄດ້ນຳພາຄະນະເຄື່ອນໄຫວເຮັດວຽກຢູ່ແຂວງຫົວພັນ, ໃນນັ້ນ ທຫລ ນຳພາໂດຍທ່ານ ບຸນເຫຼືອ ສິນໄຊວໍຣະວົງ ຜູ້ວ່າການ ທຫລ, ມີຄະນະກົມ, ຄະນະຕິດຕາມສາມອົງການຈັດຕັ້ງມະຫາຊົນ ທຫລ ເຂົ້າຮ່ວມ ເພື່ອພົບປະ ນາຍ ແລະ ພົນທະຫານ ໃນການຊຸກຍູ້ຊ່ວຍເຫຼືອ ແລະ ມອບເຄື່ອງຈຳນວນໜຶ່ງ. ໂອກາດດັ່ງກ່າວ, ທ່ານ ຄຳແພງ ໄຊສົມແພງ ເຈົ້າແຂວງ ແຂວງຫົວພັນ ໄດ້ຕີລາຄາສູງຕໍ່ການມາຢ້ຽມຢາມ ແລະ ເຮັດວຽກຢູ່ ແຂວງຫົວພັນ ຂອງການນຳກະຊວງ-ອົງການກ່ຽວຂ້ອງ ພ້ອມດ້ວຍຄະນະໃນຄັ້ງນີ້ ເຫັນວ່າ: ຍາມໃດພັກ-ລັດ ກໍ່ເຫັນໄດ້ເຖິງຄວາມສຳຄັນ ມີຄວາມເປັນຫ່ວງເປັນໄຍ, ພ້ອມທັງໄດ້ລາຍງານສະພາບການພັດທະນາເສດຖະກິດ-ວັດທະນະທຳ-ສັງຄົມຂອງແຂວງ,ວຽກງານການທ່ອງທ່ຽວ ແລະ ການເຄື່ອນໄຫວປະຕິບັດໜ້າທີ່ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ໃຫ້ຄະນະໄດ້ຮັບຊາບ.

ນອກຈາກນີ້, ທ່ານ ບຸນເຫຼືອ ສິນໄຊວໍຣະວົງ ຜູ້ວ່າການ ທຫລ ພ້ອມດ້ວຍຄະນະຍັງໄດ້ຢ້ຽມຊົມບັນດາຖານທີ່ໝັ້ນຂອງການປະຕິວັດໂດຍສະເພາະສະຖານທີ່ສ້າງຕັ້ງກອງທັບປະຊາຊົນລາວ, ໄດ້ຢ້ຽມຢາມ ແລະ ມອບເຄື່ອງອຸປະໂພກ-ບໍລິໂພກ ແລະ ວັດຖຸປັດໄຈຈຳນວນໜຶ່ງໃຫ້ປະຊາຊົນຢູ່ເຂດຈຸດສຸມລາວຮຸ່ງ ບ້ານ ແກ່ວແວ່ນ ແລະ ເຂດຈຸດສຸມພຽງສາ ບ້ານ ຄ້າງ; ການເຄື່ອນໄຫວໃນຄັ້ງນີ້, ຕົ້ນຕໍແມ່ນຕິດພັນກັບການສ້າງຂະບວນການສະເຫຼີມສະຫຼອງວັນສ້າງຕັ້ງ ທຫລ ຄົບຮອບ 55 ປີ (1968-2023) ແລະ ວັນສຳຄັນຕ່າງໆຂອງຊາດ-ຂອງພັກ ເວົ້າລວມ, ເວົ້າສະເພາະກໍ່ຄືການສ້າງຂະບວນການສະເຫຼີມສະຫຼອງວັນສ້າງຕັ້ງກອງທັບປະຊາຊົນປະຕິວັດລາວ ຄົບຮອບ 75 ປີ (1949-2024) ໂດຍຕາງໜ້າໃຫ້ ທຫລ ແລະ ອົງການຈັດຕັ້ງມະຫາຊົນຂອງ ທຫລ, ໄດ້ປະກອບສ່ວນທຶນຮອນກໍ່ສ້າງສະໂມສອນໃຫ້ກອງຮ້ອຍທະຫານຊາຍແດນ 18 ວິລະຊົນ ຢູ່ຜາຖີ່ ໃນມູນຄ່າ 300.750.000 ກີບ; ພ້ອມກັນນີ້, ຄະນະບໍລິຫານງານຊາວໜຸ່ມ ທຫລ ຍັງໄດ້ມອບເສື້ອກັນໜາວຈຳນວນ 100 ຜືນໃຫ້ປະຊາຊົນຢູ່ເຂດດັ່ງກ່າວຕື່ມອີກ. ຫຼັງຈາກນັ້ນ, ໄດ້ສົມທົບກັບອຳນາດການປົກຄອງ ເມືອງ ແອດ ເພື່ອເກັບກຳຂໍ້ມູນຄວາມຕ້ອງການທຶນກໍ່ສ້າງໂຮງຮຽນປະຖົມສົມບູນ ບ້ານ ພຽງຢາງ, ເມືອງ ແອດ, ແຂວງ ຫົວພັນ, ຊຶ່ງ ທຫລ ຈະໄດ້ສືບຕໍ່ລະດົມທຶນຈາກພາກສວນຕ່າງໆກໍຄື3ອົງການຈັດຕັ້ງມະຫາຊົນໃນຂົງເຂດທະນາຄານ ເພື່ອປະກອບສວນຕາມຄວາມເໝາະສົມ.ນອກຈາກນັ້ນ, ຍັງໄດ້ໄປຢ້ຽມຊົມຖໍ້າການນຳ ແລະ ຖໍ້າທະນາຄານ.



ທຫລ ກໍ່ຍັງໄດ້ປະກອບສ່ວນທຶນຮອນກໍ່ສ້າງສະໂມສອນກອງຮ້ອຍ
18 ວິລະຊົນ ຢູ່ເຂດຖໍ້າຜາຖີ່ ໃນມູນຄ່າ 300.750.000 ກີບ



ຊາວໜຸ່ມ ທຫລ ມອບເສື້ອກັນໜາວ 100 ຜືນ ໃນມູນຄ່າ 2.500.000 ກີບ
ໃຫ້ກອງຮ້ອຍທະຫານຊາຍແດນ 18 ວິລະຊົນ ຢູ່ເຂດຖໍ້າຜຖີ່



ຄະນະນໍາພັກ-ລັດ ຢ້ຽມຢາມປະຊາຊົນຢູ່ເຂດຈຸດສຸມ ພຽງສາ ບ້ານ ຄ້າງ



ຢ້ຽມຊົມໂຮງຮຽນປະຖົມສົມບູນ ບ້ານ ພຽງຢາງ



ຄະນະນໍາພັກ-ລັດ ຢ້ຽມຢາມປະຊາຊົນຢູ່ເຂດຈຸດສຸມ ລາວຮຸ່ງ ບ້ານ ແກ່ວແອ່ນ.



ຄະນະນໍາພັກ-ລັດ ຢ້ຽມຊົມຖໍ້າການນໍາ ແລະ ຖໍ້າທະນາຄານ.

# ຂ່າວ-ພາບ: ພະແນກຂໍ້ມູນຂ່າວສານ ແລະ ປະຊາສໍາພັນ

*ຢູ່ເມືອງລາວໃຊ້ເງິນກີບລາວ*